ສາທາລະນະລັດ ປະຊາທິປະ ໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

☆☆☆☆☆☆☆☆☆☆

ທະນາຄານແຫ່ງສປປລາວ

ພາກເໜືອທີ່ແຂວງອຸດົມໄຊ

ເລກທີ.576..../ ທຫລ.ອຊ

ອຸດົມໄຊ, ວັນທີ 01 OCT 2013

# ແຈ້ງການ

ເຖິງ: ບັນດາທ່ານຫົວໜ້າສາຂາທະນາຄານທຸລະກິດລັດ,ທະນາຄານເອກະຊົນ ແລະ ສະຖາບັນການເງິນທີ່ປະຈຳຢູ່ 4 ແຂວງພາກເໜືອຕອນເທິງ.

ເລື່ອງ: ແຈ້ງການເພີ່ມເຕີມກ່ຽວກັບຕາຕະລາງການແຂ່ງຂັນກິລາເພື່ອຂໍານັບຮັບຕ້ອນວັນສ້າງຕັ້ງ ທຫລ ຄົບຮອບ 45 ປີ.

ອີງຕາມ: ພາລະບົດບາດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ທຫລ.ອຊ ສະບັບເລກທີ່344/ທຫລ.ອຊ, ລົງວັນທີ 13/05/2008.

ອີງຕາມ: ແຈ້ງການເລກທີ 153 /ທກ,ລົງວັນທີ 21 ພຶດສະພາ 2013 ວ່າດ້ວຍການສ້າງຂະບວນການຕ້ອນຮັບ ແລະ ສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານຄົບຮອບ 45ປີ.

ອີງໃສ່ : ການຄົ້ນຄ້ວາເຫັນດີເປັນເອກະພາບຄັ້ງທີ່ສອງຂອງຄະນະສາຂາ,ຄະນະຮັບຜິດຊອບກິລາພາຍໃນ ທຫລ.ອຊຄັ້ງວັນທີ່ 30/09/2013 ວ່າດ້ວຍຄວາມເປັນເອກະພາບ ແລະ ຄວາມພ້ອມເພື່ອຮັບຮອງໃຫ້ການສ້າງຂະບວນການຄັ້ງນີ້ໃຫ້ມີບັນຍາກາດ,ເນື້ອໃນ ແລະ ທ່ວງທັນກັບເວລາທີ່ຈຳເປັນ.

ເພື່ອສືບຕໍ່ເຮັດໃຫ້ການຈັດຕັ້ງສະເຫລີມສະຫລອງວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 45 ປີ, ດຳເນີນໄປຢ່າງມີຄວາມໝາຍອັນໜັກແໜ້ນ, ມີເນື້ອໃນ, ຮູບການ, ວິທີການໃໝ່ທີ່ເລິກເຊິ່ງ ແລະ ສອດຄ່ອງແນໃສ່ເຮັດໃຫ້ເປັນຂະບວນການເຂົ້າເຖິງບັນຍາກາດຟົດຟື້ນ, ມ່ວນຊື່ນໃນຂອບເຂດທົ່ວທະນາຄານ 04 ແຂວງພາກເໜືອ ແລະ ກາຍເປັນບຸນໜຶ່ງຂອງສັງຄົມກໍ່ຄືເປັນບາງບຸນຂອງພະນັກງານທະນາຄານ ແລະ ສະຖາບັນການເງິນບົນພື້ນຖານຮັບປະກັນຄວາມສາມັກຄີ, ຄວາມເປັນປຶກແຜນຂອງລະບົບທະນາຄານ ແລະ ມີຄວາມສະຫງົບປອດໄພ.ສະນັ້ນ, ທະນາຄານແຫ່ງ ສປປ ລາວ ພາກເໜືອທີ່ແຂວງອຸດົມໄຊ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບວ່າການແຂ່ງຂັນກິລາສ້າງຂະບວນການຕ້ອນຮັບ ແລະ ສະເຫຼີມສະຫຼອງວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 45 ປີແມ່ນໄດ້ມີການປ່ຽນແປງຈາກວັນທີ 5-7 ຕຸລາ ມາເປັນວັນທີ 4-6 ຕຸລາ 2013 (ງານລ້ຽງພົບປະສັງສັນແມ່ນຈັດຂຶ້ນໃນຕອນແລງຂອງວັນທີ 6 ຕຸລາ 2013).

ດັ່ງນັ້ນ,ຈິ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດຕາມແຈ້ງການດ້ວຍ.

ຮ. ຫົວໜ້າທະນາຄານແຫ່ງສປປລາວ

ພາກເໜືອທີ່ແຂວງອຸດົມໄຊ

ວຽງສະຫວັນ ໄຊຍະວົງ

# ແຈ້ງຕາຕະລາງການແຂ່ງຂັນກິລາແຕ່ວັນທີ 4-6 ຕຸລາ 2013.

## 1. ປະເພດກິລາຕີດອກປີກໄກ່(ຕອນແລງ)

| 04/10/13 | ສາຍ A | | ທີມຊາຍ | | ສາຍ B | |
|---|---|---|---|---|---|---|
| 5:00 ↕ 10:00 | ທຄຕລ.ຜລ<br>ທພລ.ບກ | ທີມຊະນະ | ຊິງທີ່ I | ຊິງທີ່ I | ທີມຊະນະ | ທນບ.ອຊ<br>ທສກ.ຜລ |
| | ທຄຕລ.ນທ<br>ທພລ.ອຊ | ທີມຊະນະ | ຊິງຊະນະເລີດ 4/10/2013 | | ທີມຊະນະ | ທສກ.ບກ<br>ທພລ.ນທ |

| 04/10/13 | ທີມຍິງ | |
|---|---|---|
| 5:00 ↕ 10:00 | ທຄຕລ.ນທ<br>ທສກ.ນທ<br>ທຄຕລ.ຜລ | ທສກ.ອຊ<br>ທຄຕລ.ອຊ |

**ໝາຍເຫດ:**
ສຳລັບທີມຍິງແມ່ນຈະໄດ້ຈົກສະຫຼາກກັນ ໝົດເພື່ອເອົາທີມ 1 ເປັນທີມຢືນຮອບທີ່1, ຫຼັງຈາກນັ້ນໃຫ້4ທີມຈົກສະຫຼາກອີກເພື່ອ ຈັບຄູ່ແຂ່ງຂັນ. ຊິງຊະນະເລີດ 4/10/2013

## 2. ປະເພດກິລາບານເຕະ(ຕອນເຊົ້າ)

| 05/10/13 | | | |
|---|---|---|---|
| 7:30-9:15 | ທະນາຄານ.ອຊ<br>ທະນາຄານ.ບກ | ທີມຊະນະ → | ຈົກສະຫຼາກເອົາທີມ 1 ໄປລໍຖ້າຊິງຊະນະເລີດ ວັນທີ 6/10/2013, ສ່ວນ ອີກ2ທີມແມ່ນຈະໄດ້ລົງແຂ່ງ ໃນຕອນແລງວັນທີ 5/10/2013. |
| 9:30-11:15 | ທະນາຄານ.ຜລ<br>ທະນາຄານ.ນທ | ທີມຊະນະ →<br>ທຫລ.ອຊ → | |
| ຕອນແລງ<br>3:00 | ທີມ……<br>ທີມ……. | ທີມຊະນະເຂົ້າໄປຊິງ 06/10/2013 | |